**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0305/ອຄ.ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2021

# ແຈ້ງການ

**ເຖິງ:** **- ຫ້ອງການ, ສະຖາບັນ ແລະ ບັນດາກົມ ພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ**

**- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

**- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

**ເລື່ອງ:** **ການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (COVID-19)**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (COVID-19) ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.

ເພື່ອຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (COVID-19) ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແນໃສ່ເພີ່ມທະວີມາດຕະການ ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ພ້ອມດ້ວຍມາດຕະການຄວບຄຸມ, ຕິດຕາມ ແລະ ກວດກາ ເພື່ອປ້ອງກັນການກັກຕຸນສິນຄ້າ ແລະ ການສວຍໂອກາດຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ ກໍຄື ການຮັກສາໄລຍະຫ່າງທາງສັງຄົມ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ເລີ່ມແຕ່ວັນທີ 22 ເມສາ ເຖິງວັນທີ 05 ພຶດສະພາ 2021 (ຍົກເວັ້ນວັນພັກທາງລັດຖະການ) ໃຫ້ຫ້ອງການ, ສະຖາບັນ, ບັນດາກົມ ພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດມາດຕະການ ຫຼຸດຈຳນວນ ແລະ ຈັດຕັ້ງພຽນ ພະນັກງານ-ລັດຖະກອນຂອງຕົນ ລວມທັງພະນັກງານອາສາໄມ ມາປະຈຳການໃນແຕ່ລະວັນ ດັ່ງນີ້:

1.1. ໃຫ້ຮັກສາຜູ້ປະຈຳການ ມີ ຂັ້ນກົມ, ຂັ້ນພະແນກ ແລະ ຂັ້ນວິຊາການ ຕາມຄວາມເໝາະສົມຂອງວຽກງານ ແລະ ມີຈຳນວນຈຳກັດ;

1.2. ສຳລັບ ກົມການຄ້າພາຍໃນ, ກົມອຸດສາຫະກຳ ແລະ ຫັດຖະກຳ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຊັບສິນທາງປັນຍາ ທີ່ມີຄວາມຈຳເປັນເຄື່ອນໄຫວເພື່ອປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບ

ເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ໃຫ້ແຕ່ງຕັ້ງພະນັກງານປະຕິບັດວຽກງານຕາມຄວາມເໝາະສົມ ແລະ ເພື່ອສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ;

1.3. ສຳລັບ ຜູ້ທີ່ມາປະຈຳການ ຖ້າມີວຽກງານຮີບດ່ວນ ຕ້ອງລາຍງານຂໍທິດຊີ້ນຳຈາກ ຫົວໜ້າຫ້ອງການ, ສະຖາບັນ, ກົມຂອງຕົນທັນທີ ເພື່ອໃຫ້ສາມາດແກ້ໄຂວຽກງານດັ່ງກ່າວໄດ້ຢ່າງທັນການ. ສຳລັບ ພະນັກງານ-ລັດຖະກອນ ທີ່ບໍ່ໄດ້ຖືກມອບໝາຍໃຫ້ມາປະຈຳການ ແມ່ນໃຫ້ສືບຕໍ່ເຮັດວຽກຂອງຕົນ ເປັນປົກກະຕິ ຢູ່ ເຮືອນ ຫຼື ທີ່ພັກອາໄສ ໂດຍຜ່ານລະບົບສື່ສານອີເລັກໂຕຣນິກ ແລະ ເຄືອຂ່າຍອິນເຕີເນັດ ເຊັ່ນ: ໂທລະສັບ, ອີເມວ, ລະບົບກອງປະຊຸມທາງໄກ ແລະ ສື່ສັງຄົມອອນລາຍອື່ນ ໂດຍໃຫ້ຫົວໜ້າຫ້ອງການ, ສະຖາບັນ, ກົມ ມອບວຽກຢ່າງຈະແຈ້ງ ເພື່ອຮັບປະກັນໃຫ້ວຽກງານສຳເລັດຕາມແຜນການ ແລະ ຕາມພາລະບົດບາດຄວາມຮັບຜິດຊອບຂອງຕົນ.

1.4. ໃຫ້ສະຫຼຸບລາຍງານການປະຕິບັດວຽກງານປະຈຳອາທິດ ປົກກະຕິ ໂດຍສັງລວມການປະຕິບັດວຽກງານຂອງຜູ້ຖືກມອບໝາຍໃຫ້ປະຈຳການ ແລະ ຜູ້ທີ່ຖືກມອບໝາຍໃຫ້ເຮັດວຽກທາງລັດຖະການຢູ່ເຮືອນ ຫຼື ທີ່ພັກອາໄສ ແລ້ວສົ່ງໃຫ້ພະແນກເລຂານຸການ, ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຜ່ານທາງກຸ່ມອອດແອັບພະແນກສັງລວມຂອງບັນດາກົມ.

2. ໃຫ້ກົມການຄ້າພາຍໃນ ຊີ້ນຳເຈົ້າໜ້າທີ່ກວດກາການຄ້າ ຂັ້ນສູນກາງ ສົມທົບກັບເຈົ້າໜ້າທີ່ກວດກາການຄ້າ ຂັ້ນແຂວງ, ນະຄອນຫຼວງ ແລະ ຂັ້ນເມືອງ, ນະຄອນ ເພີ່ມທະວີຄວາມເອົາໃຈໃສ່ດ້ວຍຄວາມຮັບຜິດຊອບສູງໃນການຕິດຕາມການສະໜອງສິນຄ້າໃຫ້ພຽງພໍກັບຄວາມຕ້ອງການພາຍໃນ, ພ້ອມທັງ ຕິດຕາມກວດກາ ເພື່ອປ້ອງກັນການກັກຕຸນສິນຄ້າ, ການສວຍໂອກາດຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ ເປັນຕົ້ນ ຜ້າປິດປາກ-ດັງ, ຢາປົວພະຍາດ, ນ້ຳຢາລ້າງມື, ອຸປະກອນການແພດ, ເຂົ້າ, ອາຫານ, ນ້ຳດື່ມ ແລະ ອື່ນໆ ທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ. ຖ້າພົບເຫັນຜູ້ລະເມີດ ໃຫ້ນຳໃຊ້ມາດຕະການຢ່າງເຂັ້ມງວດ ໂດຍປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ດຳເນີນມາດຕະການປັບໃໝ ແລະ ລົງໂທດ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

3. ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການປະສານສົມທົບກັບ ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກສິນຄ້າ ໂດຍສະເພາະການນຳເຂົ້າສິນຄ້າປະເພດ ນ້ຳມັນເຊື້ອໄຟ ແລະ ອາຍແກັດ, ສິນຄ້າອຸປະໂພກ-ບໍລິໂພກ, ອຸປະກອນການແພດ ແລະ ຢາປົວພະຍາດ ເພື່ອໃຫ້ພຽງພໍກັບຄວາມຕ້ອງການພາຍໃນ ແຕ່ຕ້ອງປະຕິບັດຕາມມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ຄະນະສະເພາະກິດໄດ້ວາງອອກ ຢ່າງເຂັ້ມງວດ.

4. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ຄົ້ນຄວ້າພັນລະນາຍາຍເນື້ອໃນຂອງຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ທີ່ຕິດພັນກັບພາລະບົດບາດຂອງຕົນ ເປັນນິຕິກຳລະອຽດ ໂດຍສະເພາະ ການອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະການທີ່ມີຄວາມຈຳເປັນຂອງບັນດາໂຮງຈັກ, ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໂດຍໃຫ້ປະຕິບັດມາດຕະການຫຼຸດຜ່ອນຈຳນວນແຮງງານ ແລະ ມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ຄະນະສະເພາະກິດໄດ້ວາງອອກ, ພ້ອມນີ້ ໃຫ້ປະສານສົມທົບກັບຜູ້ປະກອບການໂຮງຈັກໂຮງງານ ແລະ ຂະແໜງການກ່ຽວຂ້ອງ ເພື່ອກຳນົດແຜນຮັບມື ໃນກໍລະນີທີ່ມີຄວາມຈຳເປັນຕ້ອງປິດໂຮງງານຊົ່ວຄາວ ເພື່ອຫຼຸດຜ່ອນຜົນກະທົບຕໍ່ຜູ້ປະກອບການ ແລະ ຜູ້ອອກແຮງງານ.

5. ໃຫ້ກົມສົ່ງເສີມການຄ້າ ສົມທົບກັບ ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ກົມອຸດສາຫະກຳ ແລະ ຫັດຖະກຳ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການສົ່ງເສີມ ແລະ ກະຕຸ້ນການຜະລິດສິນຄ້າອຸປະໂພກ-ບໍລິໂພກ ແລະ ສິນຄ້າຈຳເປັນ ໃຫ້ພຽງພໍກັບຄວາມຕ້ອງການ ແຕ່ຕ້ອງເຜີຍແຜ່ແນະນຳໃຫ້ຜູ້ຜະລິດປະຕິບັດຕາມມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ ຄະນະສະເພາະກິດໄດ້ວາງອອກ ຢ່າງເຂັ້ມງວດ.

6. ໃຫ້ກົມແຜນການ ແລະ ການຮ່ວມມື ເປັນເຈົ້າການສັງລວມຂໍ້ມູນຂ່າວສານການເຄື່ອນໄຫວວຽກງານຂອງຂະແໜງອຸດສາຫະກຳ ແລະ ການຄ້າ ໃນວຽກງານການປະຕິບັດມາດຕະການສະກັດກັ້ນ, ປ້ອງກັນ, ຄວບຄຸມ

ແລະ ຕ້ານການແຜ່ລະບາດຂອງພະຍາດໂຄວິດ 19 ລວມເຖິງ ຂໍ້ມູນ ກ່ຽວກັບ ການປະຕິບັດມາດຕະການຄວບຄຸມ, ຕິດຕາມ ແລະ ກວດກາ ເພື່ອປ້ອງກັນການກັກຕຸນສິນຄ້າ ແລະ ຄຸ້ມຄອງລາຄາ, ການນຳເຂົ້າ-ສົ່ງອອກ, ອຸດສາຫະກຳປຸງແຕ່ງ ພ້ອມທັງວຽກງານອື່ນໆ ພາຍໃຕ້ພາລະບົດບາດຄວາມຮັບຜິດຊອບຂອງຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອເຜີຍແຜ່ຂໍ້ມູນຂ່າວສານໃຫ້ສັງຄົມຮັບຮູ້ ຢ່າງທັນການ.

7. ໃຫ້ກົມກວດກາ ໃນນາມຄະນະປ້ອງກັນກະຊວງ ຈັດຕັ້ງການປ້ອງກັນເວນຍາມ ຕຶກອາຄານຂອງບັນດາກົມ, ສະຖາບັນ ແລະ ກະຊວງ ໂດຍປະສານສົມທົບກັບຂະແໜງປ້ອງກັນຄວາມສະຫງົບ ເພື່ອໃຫ້ຮັບປະກັນໄດ້ຄວາມສະຫງົບ ແລະ ຄວາມປອດໄພ ພ້ອມທັງ ເກັບກຳລາຍຊື່ພະນັກງານ-ລັດຖະກອນທີ່ຖືກມອບໝາຍໃຫ້ມາປະຈຳການ ເພື່ອອອກບັດຢັ້ງຢືນ ເພື່ອຜ່ານຈຸດກວດກາຂອງບ້ານ, ເມືອງ ໃນກໍລະນີມີຄວາມຈຳເປັນ ເພື່ອອຳນວຍຄວາມໃຫ້ແກ່ການມາປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນດັ່ງກ່າວ. ພ້ອມນີ້, ໃຫ້ຈັດຕັ້ງຈຸດກວດກາວັດແທກອຸນຫະພູມ ຜູ້ຈະເຂົ້າມາປະຈຳການ ຫຼື ຜູ້ທີ່ຈະເຂົ້າມາພົວພັນວຽກງານ ຢູ່ຈຸດເຂົ້າ-ອອກຂອງກົມ, ສະຖາບັນ, ກະຊວງ.

8. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຂອງ ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດວຽກງານ ທີ່ກຳນົດໃນ ຂໍ້ 1 ຮອດຂໍ້ 7 ຂອງຄຳສັ່ງສະບັບນີ້ ໂດຍຜັນຂະຫຍາຍເປັນວຽກຂອງຕົນ ຕາມພາລະບົດບາດທີ່ກຳນົດໄວ້ ໂດຍປະສານສົມທົບກັບອຳນາດການປົກຄອງແຂວງ ແລະ ເມືອງ ທີ່ຕົນສັງກັດ. ສຳລັບແຂວງອື່ນໆ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ສົມທົບກັບຄະນະສະເພາະກິດຂັ້ນແຂວງ ພິຈາລະນາການຍົກລະດັບມາດຕະການສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂ ຕາມສະພາບການລະບາດ ແລະ ຄວາມສ່ຽງຢູ່ພາຍໃນແຂວງຂອງຕົນ ແລ້ວລາຍງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຊາບ.

9. ໃຫ້ພະນັກງານ, ລັດຖະກອນ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ທັງໝົດ ຈົ່ງພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ລວມເຖິງ ບັນດາຄຳສັ່ງ, ຄຳແນະນຳຂອງຄະນະສະເພາະກິດ ກໍຄືລະບຽບຄຳສັ່ງຂອງເຈົ້າໜ້າທີ່ວາງອອກ ໂດຍສະເພາະການປະຕິບັດມາດຕະການຫ້າມອອກຈາກເຮືອນ ຫຼື ທີ່ພັກອາໄສ, ຫ້າມຊຸມນຸມ ທີ່ມີຄົນເຂົ້າຮ່ວມບໍ່ເກີນ 20 ຄົນ, ຫ້າມໂຄສະນາເຜີຍແຜ່ ສິ່ງຕໍ່ ຂໍ້ມູນຂ່າວສານທີ່ບໍ່ມູນຄວາມຈິງ, ແລະ ມາດຕະການອື່ນໆ ຢ່າງເຂັ້ມງວດ. ຖ້າຜູ້ໃດລະເມີດ ຈະຖືກປະຕິບັດວິໄນ ແລະ ຖືກມາດຕະການລົງໂທດ ຕາມກໍລະນີ ໜັກ ຫຼື ເບົາ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

10. ໃນເວລາຈັດຕັ້ງປະຕິບັດຕົວຈິງ, ຖ້າພົບບັນຫາ ໃຫ້ລາຍງານຄະນະສະເພາະກິດກະຊວງ ເພື່ອຄົ້ນຄວ້າ ແລະ ພິຈາລະນາຢ່າງທັນການ.

11. ແຈ້ງການສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ເວລາ 06:00 ໂມງ ຂອງວັນທີ 22 ເມສາ ຫາ ເວລາ 24:00 ໂມງ ຂອງວັນທີ 05 ພຶດສະພາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ຫ້ອງການ, ສະຖາບັນ, ບັນດາກົມ ພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ ພ້ອມດ້ວຍ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີ

ປອ. ຄຳແພງ ໄຊສົມແພງ